ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 31 ມີນາ ຫາ 04 ເມສາ 2025



ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ເຄື່ອນໄຫວເຮັດວຽກຢູ່ ແຂວງໄຊຍະບູລີ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ເຄື່ອນໄຫວ ເຮັດວຽກຢູ່ ແຂວງໄຊຍະບູລີ

ພາບ-ຂ່າວໂດຍ: ພະແນກ ໂຄສະນາ ແລະ ຂ່າວສານ

ໃນວັນທີ 11 ມີນາຜ່ານມາ ທີ່ຫ້ອງປະຊຸມພະແນກກະສິກຳ ແລະ ປ່າໄມ້ ແຂວງໄຊຍະບູລີ, ທ່ານ ປອ ລິນຄຳ ດວງສະຫວັນ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ພ້ອມດ້ວຍຄະນະ ໄດ້ລົງເຄື່ອນໄຫວຊຸກຍູ້ການຈັດຕັ້ງປະຕິບັດວຽກງານ ກະສິກຳ ແລະ ປ່າໄມ້ ຢູ່ແຂວງໄຊຍະບູລີ ໂດຍການຕ້ອນຮັບຂອງທ່ານ ພິງແກ້ວ ບຸນຍາວົງ ຫົວໜ້າພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ມີພາກສ່ວນກ່ຽວຂ້ອງ ຂອງພະແນກການ ເຂົ້າຮ່ວມ.

ທ່ານ ພິງແກ້ວ ບຸນຍາວົງ ໄດ້ລາຍງານການຈັດຕັ້ງປະຕິບັດວຽກງານກະສິກຳແລະປ່າໄມ້ຂອງແຂວງໃຫ້ຮູ້ວ່າ: ໃນໄລຍະ 1 ປີ ຜ່ານມາ ການຜະລິດຄ້ຳປະກັນສະບຽງອາຫານແມ່ນໄດ້ໂດຍພື້ນຖານ ເປັນຕົ້ນແມ່ນການຜະລິດເຂົ້າ, ຊີ້ນ, ໄຂ່, ປາ, ພືດ ແລະ ໝາກໄມ້ເພີ່ມຂຶ້ນແຕ່ລະປີ. ໄດ້ເອົາໃຈໃສຊຸກຍູ້ເຮັດໃຫ້ການຂະຫຍາຍຕົວ ຂອງຂະແໜງກະສິກຳ ສາມາດບັນລຸ 5,5% ແລະ ກວມເອົາ 2,4% ຂອງGDP ເຊັ່ນ: ເນື້ອທີແຜນການຜະລິດເຂົ້າທັງໝົດ 48.394 ເຮັກຕາ, ຜົນຜະລິດໄດ້ 197.500 ໂຕນ, ທຽບໃສ່ມະຕິສະພາຮັບຮອງປະຕິບັດໄດ້ 104%. ການຜະລິດເຂົ້ານາປີ ແຜນການປູກເຂົ້າໃຫ້ໄດ້ 36.824 ເຮັກຕາ ປະຕິບັດໄດ້ 37.008, 09 ເຮັກຕາ ເທົ່າກັບ 101%, ການປູກເຂົ້ານາແຊງ ແຜນການເນື້ອທີ 1.900 ເຮັກຕາ ປະຕິບັດໄດ້ 1.881, 09 ເຮັກຕາ ເທົ່າກັບ 99% ແລະ ການຜະລິດເຂົ້າໄຮ່ ເນື້ອທີ 10.000 ເຮັກຕາ ປະຕິບັດໄດ້ 104,10% ປັດໃຈອັນພົ້ນເດັ່ນແມ່ນການສົ່ງເສີມພຶດລະດູແລ້ງ. ໂດຍສະເພາະໝາກຖົ່ວເຫຼືອງຜັກສົດ, ຖົ່ວດິນ, ມີສັດລ້ຽງທັງໝົດ 6.263.931 ໂຕ ເທົ່າກັບ 7,86%.

ໂອກາດນີ້, ທ່ານ ປອ ລິນຄຳ ດວງສະຫວັນ ໄດ້ເນັ້ນໜັກໃຫ້ເອົາໃຈໃສ່ສຶກສາອົບຮົມ ດ້ານການ

ເມືອງແນວຄິດ ໂດຍນຳເອົາແນວທາງນະໂຍບາຍຕ່າງໆໄປເຊື່ອມຊຶມໃຫ້ພະນັກງານໄດ້ກຳແໜ້ນ ນຳໄປຈັດ ຕັ້ງປະຕິບັດເຂົ້າໃນວຽກງານຕົວຈິງ, ເອົາໃຈໃສ່ປະຕິບັດໜ້າທີ່ວຽກງານຕາມພາລະບົດບາດຂອງຕົນ, ເປັນເສນາທິການທີ່ດີໃຫ້ແກ່ການນຳ ໂດຍຄົ້ນຄ້ວາໃຫ້ເລິກເຊິ່ງ ແລະ ເອົາໃຈໃສ່ໃນການພັດທະນາຍົກລະດັບຄວາມຮູ້ຄວາມສາມາດ ໃຫ້ພະນັກງານທ້ອງຖິ່ນໃຫ້ສູງຂຶ້ນເລື້ອຍໆ. ຈາກນັ້ນ, ກໍໄດ້ລົງຢ້ຽມຢາມການປູກພືດລະດູແລ້ງທີ່ງນາໄໝ ເຊັ່ນ: ການປູກໝາກຖົ່ວເຫຼືອງ ແລະ ຢາສູບ








ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອນດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນວນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;